RECEIVED
16 JAN 2024

# ບົດບັນທຶກກອງປະຊຸມ
# ຂະແໜງການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ປະຈຳປີ 2023
# ຄັ້ງວັນທີ 07 ທັນວາ 2023
# ທີ່ໂຮງແຮມຄຣາວພາຊາ, ນະຄອນຫຼວງວຽງຈັນ

---

## I. ພາກອະລຳພາບົດ.

ໃນວັນທີ 7 ທັນວາ 2023, ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ ແລະ ສະຖານທູດສະຫະລັດອາເມລິກາ ປະຈຳ ສປປ ລາວ ຮ່ວມກັນຈັດກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ປະຈຳປີ 2023 ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ ຄັ້ງທີ 2 ປະຈຳປີ 2023 ທີ່ໂຮງແຮມ ຄຣາວພາຊາ, ນະຄອນຫຼວງວຽງຈັນ. ໃຫ້ກຽດເຂົ້າຮ່ວມພິທີໂດຍ ຄຊກລ ຂັ້ນສູນກາງ ແລະ ຂັ້ນແຂວງ, ມິທູຕານຸທູດ, ຕາງໜ້າບັນດາປະເທດຜູ້ໃຫ້ທຶນ, ອົງການກອຍກາ, ໂຄງການເກັບກູ້ລະເບີດແຫ່ງຊາດ, ວິຊາການຂອງ ສປຊ ເພື່ອການພັດທະນາ ແລະ ຫ້ອງການ ຄຊກລ ກໍເຂົ້າຮ່ວມ. ຊຶ່ງລວມທັງໝົດ 80 ກວ່າຄົນ ທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້.

## II. ພາກກ່າວຕ້ອນຮັບ ແລະ ກ່າວເປີດກອງປະຊຸມ.

### 1. ທ່ານ ໂພໄຊ ໄຊຄຳພິທູນ, ຮອງລັດຖະມົນຕີກະຊວງການຕ່າງປະເທດ

- ທ່ານ ໂພໄຊ ໄຊຄຳພິທູນ, ໄດ້ກ່າວຕ້ອນຮັບຜູ້ແທນກອງປະຊຸມ ແລະ ມີຄວາມເຫັນກ່າວເປີດກອງປະຊຸມຢ່າງເປັນທາງການ.
- ທ່ານ ໂພໄຊ ໄຊຄຳພິທູນ ໄດ້ລາຍງານສະພາບຫຍໍ້ຂອງການປ່ຽນຖ່າຍການຄຸ້ມຄອງຫ້ອງການ ຄຊກລ ຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມາເປັນກະຊວງການຕ່າງປະເທດ.
- ທ່ານຍັງໄດ້ລາຍງານຕື່ມວ່າ ໃນໄລຍະ 1 ປີທີ່ຜ່ານມາ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຕາມພາລະບົດບາດຂອງຕົນຢ່າງຕໍ່ເນື່ອງ ເພື່ອໃຫ້ສຳເລັດຕາມເປົ້າໝາຍຍຸດທະສາດແຫ່ງຊາດ ເພື່ອແກ້ໄຂບັນຫາ ລບຕ "ເສັ້ນທາງກ້າວສູ່ຄວາມປອດໄພ III" ໄລຍະ 2021-2030.
- ນອກຈາກນັ້ນ, ຍັງໄດ້ກ່າວຕື່ມວ່າ ວຽກງານແກ້ໄຂບັນຫາ ລບຕ ຍັງໄດ້ເຊື່ອມສານເຂົ້າໃນຂະແໜງການສຶກສາທິການ ແລະ ກິລາ, ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ສາທາລະນະສຸກ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ. ຜ່ານການຊີ້ນຳ-ນຳພາ ແລະ ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງແກ້ໄຂບັນຫາ ລບຕ ແຕ່ລະຂັ້ນ ໂດຍສະເພາະແມ່ນການໂຄສະນາສຶກສາຄວາມສ່ຽງໄພ, ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ການສຳຫຼວດ-ກວດກູ້ ແລະ ທຳລາຍ, ການຄຸ້ມຄອງການເຄື່ອນໄຫວອົງການປະຕິບັດງານ ລບຕ

ເພື່ອມະນຸດສະທຳ ເຫັນໄດ້ວ່າ ສາມາດຕອບສະໜອງຕາມແຜນການໃນແຕ່ລະໄລຍະໃນການພັດທະນາເສດຖະກິດ-ສັງຄົມ.

- ຄຽງຄູ່ກັບຜົນສຳເລັດ, ທ່ານ ຍັງກ່າວຕື່ມວ່າ ຍັງຫຼາຍບັນຫາເປັນສິ່ງທ້າທາຍ ແລະ ຊອກຫາທາງອອກຮ່ວມກັນ ເປັນຕົ້ນ: ການເກີດອຸປະຕິເຫດໃນ ສປປ ລາວ ຍັງຄົງສືບຕໍ່ເປັນໄພຂົ່ມຂູ່ໃຫ້ປະຊາຊົນລາວໃນແຕ່ລະແຂວງ. ໃນປີ 2023, ມີຈຳນວນການເກີດອຸປະຕິເຫດທັງໝົດ 18 ຄັ້ງ ເຮັດໃຫ້ມີຜູ້ໄດ້ຮັບຜົນກະທົບຈາກ ລບຕ ເພີ່ມຂຶ້ນເມື່ອທຽບໃສ່ປີທີ່ຜ່ານມາ. ບັນຫາດັ່ງກ່າວແມ່ນໄດ້ສະແດງອອກໃນວຽກງານໂຄສະນາສຶກສາຄວາມສ່ຽງໄພຍັງບໍ່ສາມາດເຂົ້າເຖິງພື້ນທີ່ຫ່າງໄກສອກຫຼີກ, ຕົວເລກການສຳຫຼວດ-ກວດກູ້ ແລະ ທຳລາຍຍັງບໍ່ສາມາດບັນລຸໄປຕາມເປົ້າໝາຍທີ່ໄດ້ວາງອອກ (10.000 ເຮັກຕາຕໍ່ປີ).

**2. ທ່ານ Michelle Y. Outlaw, ອຸປະທູດສະຫະລັດອາເມລິກາ ປະຈຳ ສປປ ລາວ**

- ທ່ານ ໄດ້ກ່າວຂອບໃຈ ມາຍັງກະຊວງການຕ່າງປະເທດ ທີ່ໄດ້ຈັດກອງປະຊຸມໃນຄັ້ງນີ້. ຊຶ່ງນີ້ເປັນຄັ້ງທຳອິດ ທີ່ຂ້າພະເຈົ້າໄດ້ເປັນປະທານຮ່ວມໃນກອງປະຊຸມດັ່ງກ່າວ.
- ສະຫະລັດອາເມລິກາ ຮູ້ສຶກພາກພູມໃຈທີ່ໄດ້ເປັນຄູ່ຮ່ວມພັດທະນາ ແລະ ປະເທດສະໜັບສະໜູນໃຫ້ແກ່ ສປປ ລາວ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງທີ 18 ເພື່ອກາຈັດສິ່ງກີດຂວາງໃນການພັດທະນາແຫ່ງຊາດໃນປີ 2030.
- ສະຫະລັດອາເມລິກາ ພູມໃຈທີ່ໄດ້ເປັນປະເທດຜູ້ໃຫ້ທຶນທີ່ຫຼາຍທີ່ສຸດໃນຂະແໜງການແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ຊຶ່ງໄດ້ໃຫ້ການຊ່ວຍເຫຼືອຫຼາຍກວ່າ 355 ລ້ານໂດລາສະຫະລັດ ແຕ່ປີ 1995.
- ນອກຈາກນັ້ນ, ຍັງໄດ້ກ່າວເຖິງການເຂົ້າຮ່ວມຢ້ຽມຢາມພາກສະໜາມຂອງ ຄກລ ໃນ ເດືອນທີ່ຜ່ານມາ ທີ່ແຂວງ ຊຽງຂວາງ.
- ສຳຫຼັບ 40 ທີມກວດກູ້ໃຫມ່ໃນ 5 ແຂວງພາກໃຕ້ ທີ່ໄດ້ປະກາດໃນກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ ໃນເດືອນ ມິຖຸນາ ທີ່ຜ່ານມາ ຊຶ່ງປະຈຸບັນ ແມ່ນກຳລັງຈັດຕັ້ງປະຕິບັດ ແລະ ປະຈຸບັນມີຈຳນວນທີມກວດກູ້ຈາກ ທຶນສະຫະລັດອາເມລິກາມີທັງໝົດ 202 ທີມ.
- ຄຽງຄູ່ກັບຜົນສຳເລັດດັ່ງກ່າວ, ພວກເຮົາຍັງໄດ້ຮັບຂ່າວວ່າ ກະຊວງການຕ່າງປະເທດ ໄດ້ອະນຸມັດໂຄງການໄລຍະ II ຂອງອົງການ ຮາໂລທັສ. ຊຶ່ງໃນນີ້, ມີງົບປະມານ 40 ລ້ານໂດລາສະຫະລັດ ໃນການຈັດຕັ້ງປະຕິບັດກິດຈະກຳໃນແຂວງ ສະຫວັນນະເຂດ ຈົນຮອດໄລຍະເດືອນເມສາ 2025.
- ຂໍຂອບໃຈຕໍ່ລັດຖະບານ ສ. ອາເມລິກາ ໃນການຂະຫຍາຍທຶນການກວດກູ້ໃຫ້ກັບຂະແໜງການແກ້ໄຂບັນຫາ ລບຕ. ຊຶ່ງປະຈຸບັນ, ສະຫະລັດອາເມລິກາ ສາມາດໃຫ້ການຝຶກອົບຮົມນັກເກັບກູ້ ລບຕ ຂັ້ນວິຊາການ. ຫ້ອງການ ຄຊກລ ແລະ ອົງການເທັກທຣາເທັກ ໄດ້ປຶກສາຫາລືໃນການຈ້າງຊ່ຽວຊານຕ່າງປະເທດ ເພື່ອຝຶກອົບຮົມໃຫ້ນັກເກັບກູ້ລະເບີດຂັ້ນອາວຸໂສໃນປີໜ້າ.
- ນອກຈາກນີ້, ກິດຈະກຳ “Train-the-Trainer” ຈະໄດ້ຈັດຂຶ້ນໃນເດືອນມີນາ 2024 ທີ່ຫວຽດນາມ ແລະ ເປັນໂອກາດທີ່ດີ ທີ່ຜູ້ເຂົ້າຮ່ວມຈາກ ສປປ ລາວ ຈະເຂົ້າໄປເປັນຜູ້ສັງເກດການ ແລະ ຮຽນຮູ້ເອົາບົດຮຽນມາພັນຂະຫຍາຍໃຫ້ກອງ 58 ໃນອະນາຄົດ.

III. ພາກການນຳສະເໜີ.

1. ການນຳສະເໜີຂອງ ທ່ານ ໂຈມແຍງ ແພງທອງສະຫວັດ, ຫົວໜ້າຫ້ອງການ ຄຊກລ ໄດ້ລາຍງານຜົນສຳເລັດ, ສິ່ງທ້າທາຍ ແລະ ກາລະໂອກາດໃນການດຳເນີນການແກ້ໄຂບັນຫາ ລບຕ ທີ່ປະເທດ ຊຶ່ງລວມມີ ການສະເໜີຂໍຕໍ່ໄລຍະເວລາໃນການຈັດຕັ້ງປະຕິບັດມາດຕາ 4 ຂອງສົນທິສັນຍາເກືອດຫ້າມລະເບີດລູກຫວ່ານ, ຕອບສະໜອງຕໍ່ຄຳແນະນຳຂອງຜົນການສຳຫຼວດພຶດຕິກຳພາຍຫຼັງຮັບຟັງການໂຄສະນາສຶກສາຄວາມສ່ຽງໄພ ແລະ ບົດລາຍງານຜົນກະທົບຂອງການນຳໃຊ້ພື້ນທີ່ດິນພາຍຫຼັງໄດ້ຮັບການກວດກູ້, ຝຶກອົບຮົມ 13 ທີມໃໝ່ຂອງກອງກວດກູ້ລະເບີດເພື່ອມະນຸດສະທຳກອງກັບ (ກອງ 58); ການສ້າງທີມຕັດຫຍ້າໃໝ່, ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງຜັນຂະຫຍາຍດຳລັດ ເລກທີ 210/ລບ ກ່ຽວກັບການຄຸ້ມຄອງວຽກງານແກ້ໄຂບັນຫາ ລບຕ, ເຂົ້າຮ່ວມກອງປະຊຸມສົນທິສັນຍາລະເບີດລູກຫວ່ານ ແລະ ກອງປະຊຸມສົນທິສັນຍາວ່າດ້ວຍການເກືອດຫ້າມອາວຸດທຳມະດາບາງປະເພດ ແລະ ກອງປະຊຸມພາກພື້ນ (ການຮ່ວມມືໃນບັນດາປະເທດອາຊຽນ: ຊຸດຝຶກອົບຮົມພາຍໃຕ້ຫົວຂໍ້ປົດປ່ອຍພື້ນທີ່ດິນ, ການຮ່ວມມື South-South: ແລກປ່ຽນວຽກງານດ້ານກວດກາຄຸນະພາບ ແລະ ຖານຂໍ້ມູນ, ການເຂົ້າຮ່ວມກອງປະຊຸມຢູ່ ກຳປູເຈັຍ). ນອກຈາກນັ້ນ, ຍັງໄດ້ລາຍງານຈັດຕັ້ງປະຕິບັດກິດຈະກຳ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ, ການສຳຫຼວດ-ກວດກູ້ ແລະ ທຳລາຍ, ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ການກວດກາຄຸນນະພາບ ແລະ ອື່ນໆ.

2. ການນຳສະເໜີຂອງ ທ່ານ ນາງ ມຸກດາວັນ ສີສຸລິດ, ຮອງກົມອົງການຈັດຕັ້ງສາກົນ, ກະຊວງການຕ່າງປະເທດ ໄດ້ລາຍງານການມອບ-ໂອນ ວຽກງງານແກ້ໄຂບັນຫາ ລບຕ ມາຂຶ້ນກັບກະຊວງການຕ່າງປະເທດ, ນຳສະເໜີການປັບປຸງກົນໄກກອງປະຊຸມ UXO Sector Working Group ພາຍໃຕ້ການຊີ້ນຳຂອງກະຊວງການຕ່າງປະເທດ ລວມທັງແຜນການປັບປຸງວຽກງານດັ່ງກ່າວໃນອະນາຄົດ. ໃນການປັບປຸງກົນໄກກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ ໃນຄັ້ງນີ້ ແມ່ນຍັງຮັກສາກົນໄກກອງປະຊຸມ 2 ຄັ້ງຕໍ່ປີ ແຕ່ຈະປ່ຽນລະດັບປະທານ ໃນກອງປະຊຸມກາງປີ ເປັນລະດັບ ທ່ານ ຫົວໜ້າກົມ ອົງການຈັດຕັ້ງສາກົນ ໂດຍຈະເລັ່ງໃສ່ການປຶກສາຫາລື ທີ່ເປັນລັກສະນະວິຊາການ ທີ່ຈະນຳມາສູ່ພາກຈັດຕັ້ງປະຕິບັດ ແລະ ເລັ່ງແກ້ໄຂບັນຫາ ຫຼື ສິ່ງທ້າທາຍໃນແຕ່ລະໄລຍະໄດ້ຢ່າງທັນການ, ສະເໜີໃຫ້ມີການໝູນວຽນປະທານຮ່ວມ ເພື່ອຮັບປະກັນການມີສ່ວນຮ່ວມຢ່າງເຕັມສ່ວນຂອງບັນດາປະເທດຜູ້ໃຫ້ທຶນ ພ້ອມທັງເປັນການຍົກບົດບາດຂອງກົນໄກດັ່ງກ່າວໃຫ້ເປັນເວທີລະດົມແນວຄວາມຄິດ ເພື່ອພັດທະນາຂະແໜງການແກ້ໄຂບັນຫາ ລບຕ ຢ່າງແທ້ຈິງ. ສຳລັບກອງປະຊຸມວິຊາການ (Technical Working Group) ສະເໜີໃຫ້ມີກອງປະຊຸມວິຊາການເພີ່ມອີກເວທີໜຶ່ງໃນລະດັບຫົວໜ້າອົງການປະຕິບັດງານ ເພື່ອປຶກສາຫາລືທຸກບັນຫາທີ່ປິ່ນອ້ອມ ແລະ ເປີດກວ້າງ ເພາະວ່າກອງປະຊຸມວິຊາການຈະມີໜ້າທີ່ຄົ້ນຄວ້າພິຈາລະນາບັນຫາ, ສະເໜີວິທີທາງແກ້ໄຂ ຫຼື ຂໍ້ສະເໜີຕ່າງໆມາໃຫ້ກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ ນຳໄປພິຈາລະນາໃນຂັ້ນຕໍ່ໄປ.

IV. ພາກການປະກອບຄວາມເຫັນ ແລະ ປຶກສາຫາລື.

- ທ່ານ ລູເພີດ ເລຕັນ, ຫົວໜ້າທີ່ປຶກສາທາງເຕັກນິກ ສປຊ ເພື່ອການພັດທະນາ. ໄດ້ສອບຖາມກັບ ທ່ານ ນາງ ມຸກດາວັນ ສີສຸລິດ ຕື່ມວ່າ: ຄວາມແຕກຕ່າງກອງປະຊຸມກາງປີ ແລະ ກອງປະຊຸມ ທ້າຍປີ ຂອງຂະ ແໜງການແກ້ໄຂບັນຫາ ລບຕ ແນວໃດ?

- **ທ່ານ ນາງ ມຸກດາວັນ ສີສຸລິດ, ຮອງກົມອົງການຈັດຕັ້ງສາກົນ.** ກອງປະຊຸມ SWG ຮູບແບບໃໝ່ນີ້ ແມ່ນເພື່ອເປັນການປຶກສາຫາລືກັນໃຫ້ມີປະສິດທິຜົນ, ໂປ່ງໃສ ລວມໄປເຖິງການປະຕິບັດຕົວຈິງ, ຮັດກຸມສຳລັບບັນດາພາກສ່ວນກ່ຽວຂ້ອງທີ່ສຳຄັນໃນຂະແໜງການແກ້ໄຂບັນຫາ ລບຕ ແລະ ເພີ່ມທະວີໂອກາດການສະໜອງທຶນໂດຍແຜນການສົນທະນາທີ່ສ້າງສັນ ແລະ ຄວາມຮັບຜິດຊອບຂອງທຸກພາກສ່ວນ.
- **ທ່ານ ນາງ ມີນຢອງ ກິມ, ຫົວໜ້າພະແນກ ລບຕ ສປຊ ເພື່ອການພັດທະນາ.** ດີໃຈທີ່ເຫັນວ່າ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຖືວ່າໄດ້ຮັບການພັດທະນາຫຼາຍ ທີ່ສາມາດໃຫ້ການຊ່ວຍ ໄດ້ຈຳນວນຫຼາຍ ແລະ ເໜັ້ນຢ້ຳການສືບຕໍ່ໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ. ຊຶ່ງໃນປີໜ້າ ສປຊ ເພື່ອການພັດທະນາ ຈະດຳເນີນການວິໄຈກ່ຽວກັບການໃຫ້ການຊ່ວຍເຫຼືອຜູ້ທີ່ຖືກເຄາະຮ້າຍຈາກ ລບຕ.
- **ຕາງໜ້າຈາກສະຖານທູດອັງກິດ.** ບັນດາໂຄງການທີ່ຂຶ້ນກັບການຊີ້ນຳ-ນຳພາ ຈາກກະຊວງການຕ່າງປະເທດຈະເປັນບາດກ້າວທີ່ດີ ຊຶ່ງພວກເຮົາກໍມີສາຍສຳພັນທີ່ດີກັບກັບກະຊວງການຕ່າງປະເທດ ແລະ ພວກເຮົາກໍໄດ້ສະໜັບສະໜູນການກະກຽມກອງປະຊຸມອາຊຽນໃນປີໜ້າ. ໃນ 7 ປີທີ່ຜ່ານມາ, ອັງກິດໄດ້ໃຫ້ການສະໜັບສະໜູນກ່ຽວກັບວຽກງານແກ້ໄຂບັນຫາ ລບຕ ຫຼາຍກວ່າ 20 ລ້ານໂດລາສະຫະລັດ ໂດຍຜ່ານໂຄງການຂອງ ຮາໂລ ແລະ ແມັກ ແລະ ໂຄງການຈະສືບຕໍ່ຈົນຮອດເດືອນພຶດສະພາ 2025.
- **Ms. Rebacca Derry, Country Director of World Education.** ດັ່ງທີ່ບັນດາທ່ານໄດ້ຮັບຊາບແລ້ວ, ພວກເຮົາໄດ້ສຸມໃສ່ການຈັດຕັ້ງປະຕິບັດວຽກງານໂຄສະນາສຶກສາຄວາມສ່ຽງ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. ທີ່ຜ່ານມາ, ພວກເຮົາມີສາຍສຳພັນທີ່ດີກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ພວກເຮົາກໍຕື່ນເຕັ້ນທີ່ຈະໄດ້ເຮັດວຽກກັບກະຊວງການຕ່າງປະເທດເຊັ່ນດຽວກັນ. ຜ່ານການນຳສະເໜີການປ່ຽນແປງຂອງກຸ່ມກອງປະຊຸມ, ພວກເຮົາຮູ້ສຶກຕື່ນເຕັ້ນທີ່ຈະເຫັນປະທານຮ່ວມໃນກອງປະຊຸມດັ່ງກ່າວ ແລະ ຈະໃຫ້ການສືບຕໍ່ຮ່ວມມື ແລະ ການທີ່ເຮົາຈັດກອງປະຊຸມແຕ່ລະຂັ້ນນັ້ນ, ຈະໄດ້ເຮັດວຽກງານສະເພາະຂອງກຸ່ມວຽກໄດ້ຮັບການແກ້ໄຂຢ່າງທັນການ.
- **ທ່ານ ຕາງໜ້າກົມຮ່ວມມືສາກົນ ກະຊວງ ແຜນການ ແລະ ການລົງທຶນ.** ການນຳສະເໜີໃນມື້ນີ້ແມ່ນໄດ້ລະບຸຜົນສຳເລັດໃນວຽກງານແກ້ໄຂບັນຫາ ລບຕ ແລະ ຈະໄດ້ປະສານຢ່າງລະອຽດກັບກອງເລຂາກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ ເພື່ອນຳເອົາບົດລາຍງານດັ່ງກ່າວມາໃນການຈັດຕັ້ງປະຕິບັດໃນໄລຍະຕໍ່ໄປ. ຈະສືບຕໍ່ປະສານສົມກັບກອງເລຂາກອງເລຂາຂະແໜງການແກ້ໄຂບັນຫາ ລບຕ ທີ່ປະຈຸບັນໄດ້ໄປຂຶ້ນກັບກະຊວງການຕ່າງປະເທດ.
- **ທ່ານ ໂອລີເວຍ ທີ່ປຶກສາວຽກງານແຜນການ, ສະຖານທູດ ສ. ອາເມລິກາ.** ໃນປີ 2023 ນີ້, ພວກເຮົາດຳເນີນການກວດກູ້ພື້ນທີ່ ລບຕ ໄດ້ຫຼາຍກວ່າປີ 2022 ເພາະວ່າພວກເຮົາມີທີມກວດກູ້ຫຼາຍຂຶ້ນ ຊຶ່ງຄາດວ່າໃນປີ 2024, ເຮົາຈະດຳເນີນການກວດກູ້ພາຍໃນບັນດາແຂວງໃຫ້ໄດ້ຫຼາຍຂຶ້ນ ດ້ວຍກຳລັງທີມທີ່ເພີ່ມຂຶ້ນໃນໄລຍະ 1 ປີ ສົມທົບກັບ ຄກລ ຈາກທີ່ເຄີຍປະຕິບັດງານຢູ່ 5 ແຂວງ ຈະເພີ່ມຂຶ້ນເປັນ 9 ແຂວງເຊັ່ນດຽວກັນກັບກອງ 58 ທີ່ສາມາດຂະຫຍາຍທີມຕາມເປົ້າໝາຍໄດ້. ຂໍສະແດງຄວາມຊົມເຊີຍຕໍ່ຂໍ້ສະເໜີຂອງກະຊວງການຕ່າງປະເທດ ທີ່ຈະຈັດກອງປະຊຸມວິຊາການທີ 5 ຂຶ້ນ ເພື່ອປັບປຸງນະໂຍບາຍ ແລະ ການປະສານງານ ໂດຍສະເພາະຈຸດທີ່ຄວນໄດ້ຮັບການແລກປ່ຽນ ແລະ ປຶກສາຫາລື. ນອກຈາກນັ້ນ, ທ່ານຍັງໄດ້ສະເໜີໃຫ້ກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ ມອບໝາຍໃຫ້ຫ້ອງການ ຄຊກລ ແລະ

ກອງປະຊຸມວິຊາການ ດຳເນີນການທົບທວນມາດຕະຖານແຫ່ງຊາດໃຫ້ຮີບດ່ວນ. ໃນກອງປະຊຸມທີ່ວັງວຽງ ໃນເດືອນກັນຍາ 2023 ທີ່ຜ່ານມາ, ໃນເວລາປຶກສາຫາລືກ່ຽວກັບການກອດກາ ແລະ ປັບປຸງມາດຕະຖານແຫ່ງຊາດ, ຫ້ອງການ ຄຊກລ ຄວນລາຍງານຄວາມຄືບໜ້າຂອງການປັບປຸງມາດຕະຖານແຫ່ງຊາດ ຕໍ່ກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ ປະຈຳປີ 2024.

- **ທ່ານ ໄຊມອນ ເຣ, ຫົວໜ້າ ບໍລິສັດ ເທັກທຣາ ເທັກ.** ມີຄຳເຫັນແນະນຳ ຫວັງຢ່າງຍິ່ງວ່າຈະມີຜົນສຳເລັດ 10,000 ຮຕ ຕໍ່ປີ. ເນື່ອງຈາກຈະໃຫ້ການສືບຕໍ່ການຈັດຕັ້ງປະຕິບັດ ຢູ່ແຂວງຫຼວງພະບາງ ແລະ ຫົວພັນ.
- **ທ່ານ ລູເພີດ ເລຕັນ, ຫົວໜ້າທີ່ປຶກສາທາງເຕັກນິກ ສປຊ ເພື່ອການພັດທະນາ.** ມີຄຳເຫັນແນະນຳ ເພື່ອເຮັດໃຫ້ບັນລຸ ຕົວເລກ 10.000 ເຮັກຕາ ຄວນພິຈາລະນາການນຳໃຊ້ເຕັກນິກ ແລະ ວິທີການໃໝ່ໆ.
- **ທ່ານ ທິບພະສອນ ສຸຂະທຳມະວົງ ຮອງຫົວໜ້າກົມແຜນການ ແລະ ຮ່ວມມືສາກົນ ກະຊວງ ຮສສ.** ມີຄຳເຫັນຢັ້ງຢືນເຖິງຄວາມສຳຄັນຂອງວຽກງານແກ້ໄຂບັນຫາ ລບຕ ເພື່ອເປັນການຕອບສະໜອງຍຸດທະສາດເສັ້ນທາງກ້າວສູ່ຄວາມປອດໄພ 3, ເປົ້າໝາຍພັດທະນາແບບຍືນຍົງ ທີ 18. ຄຽງຄູ່ກັນນີ້, ຍັງຍົກໃຫ້ເຫັນບັນຫາທ້າທາຍໃນການກຳເກັບຂໍ້ມູນລາຍງານຕົວຊີ້ວັດ ທີ່ກຳນົດຢູ່ໃນເປົ້າໝາຍຕົວຊີ້ວັດ 18.2.
- **ທ່ານ ໂຈມແຍງ ແພງທອງສະຫວັດ, ຫົວໜ້າຫ້ອງການ ຄຊກລ.** ໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນໃນການການວາງແຜນບູລິມະສິດແຫ່ງຊາດ ວຽກງານແກ້ໄຂບັນຫາ ລບຕ ເຊິ່ງພົວພັນເຖິງແຜນບູລິມະສິດກັບຂະແໜງການທີ່ກ່ຽວຂ້ອງ ຄວນມີຄວາມລະອຽດຊັດເຈນ ເພື່ອສະດວກໃນການການົດບູລິມະສິດໃນການແກ້ໄຂບັນຫາ ລບຕ.

## V. ພາກສັງລວມ ແລະ ກ່າວປິດກອງປະຊຸມ

**1. ທ່ານ ນາງ Martine Thérer, ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ**

- ທ່ານໄດ້ສະແດງຄວາມຂອບໃຈຜູ້ແທນກອງປະຊຸມທີ່ໄດ້ນຳສະເໜີບັນຫາຕ່າງໆໃນກອງປະຊຸມ.
- ອີກຄັ້ງໜຶ່ງ, ຂໍສະແດງຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍຕໍ່ກັບກະຊວງການຕ່າງປະເທດ ຕໍ່ຄວາມສຳເລັດໃນຄັ້ງນີ້.
- ພວກເຮົາຍິນດີຕ້ອນຮັບທຸກທ່ານ ຕໍ່ການລິເລີ່ມຂອງກະຊວງການຕ່າງປະເທດ ເພື່ອຊຸກຍູ້ການພົວພັນ ແລະ ການແລກປ່ຽນຄຳຄິດເຫັນ ແລະ ການປ່ຽນແປງອື່ນໆໃນຂະແໜງການແກ້ໄຂບັນຫາ ລບຕ, ຫວັງວ່າຄູ່ຮ່ວມມືພັດທະນາ, ຜູ້ປະກອບການທັງໝົດ ແລະ ອົງການທີ່ບໍ່ສັງກັດກັບລັດຖະບານ ຜູ້ທີ່ມີບົດບາດສຳຄັນໃນການຈັດຕັ້ງປະຕິບັດວຽກງານໃຫ້ບັນລຸເປົ້າໝາຍຂອງລັດຖະບານ ແລະ ບັນລຸຕາມເປົ້າໝາຍສຳຫຼວດ-ກວດກູ້, ການໂຄສະນາສຶກສາຄວາມສ່ຽງ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ທີ່ໄດ້ວາງອອກຕໍ່ກັບຂະບວນການປະຕິບັດງານຂອງຂະແໜງການແກ້ໄຂບັນຫາ ລບຕ.
- ຂ້າພະເຈົ້າຫວັງວ່າ ພວກເຮົາຈະນຳໃຊ້ເວທີກອງປະຊຸຂະແໜງການແກ້ໄຂບັນຫາ ລບຕ ເພື່ອແລກປ່ຽນບົດຮຽນ ແລະ ແນວຄວາມຄິດໃໝ່ໆ ເພື່ອຫາທາງອອກຊ່ວຍກັນ ແລະ ກ້າວໄປສູ່ຜົນສຳເລັດ ເພື່ອໃຫ້ປະຊາຊົນປອດໄພຈາກພື້ນທີ່ ລບຕ.

- ພວກເຮົາຕ້ອງກ້າທີ່ຈະເຮັດສິ່ງໃໝ່ໆ ເພື່ອໃຫ້ໄດ້ຜົນຕອບຮັບທີ່ດີກວ່າ. ດັ່ງນັ້ນ, ພວກເຮົາຄວນລິເລີ່ມຮັບເອົາຄວາມສ່ຽງໃຫ້ຫຼາຍຂຶ້ນ ແລະ ປູກຝັງວິທີການເຮັດວຽກແບບໃໝ່ ເພື່ອເຮັດໃຫ້ວິທີການປະຕິບັດງານຂອງພວກເຮົາໃຫ້ດີຂຶ້ນ.
- ສປປ ລາວ ຈະເປັນເຈົ້າພາບຈັດກອງປະຊຸມອາຊຽນໃນປີໜ້າ. ອົງການ ສປຊ ເພື່ອການພັດທະນາ ພ້ອມທີ່ຈະສະໜັບສະໜູນກະຊວງການຕ່າງປະເທດ ເພື່ອຮັບປະກັນວ່າ ສປປ ລາວ ຈະເປັນປະເທດໜຶ່ງທີ່ນໍາພາຂະແໜງການ ແລະ ເຮັດໃຫ້ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານທັນເປັນສາກົນ ໃນຖານະທີ່ ສປປ ລາວ ເປັນປະເທດທີ່ມີ ລບຕ ຫຼາຍທີ່ສຸດໃນໂລກ.
- ຂ້າພະເຈົ້າຂໍເນັ້ນໜັກຕໍ່ກັບການບັນລຸການທົບທວນມາດຕະຖານແຫ່ງຊາດ ແລະ ແຜນບູລິມະສິດແຫ່ງຊາດ ເພື່ອເຮັດໃຫ້ບັນລຸເປົ້າໝາຍຮ່ວມກັນ.
- ສຸດທ້າຍນີ້, ຂ້າພະເຈົ້າຂໍຢໍ້າຄືນຕໍ່ກັບຄໍາຂວັນຂອງປີນີ້ແມ່ນ “UXO/Mine Action Cannot Wait”. ພວກເຮົາຕ້ອງເຮັດວຽກດ້ວຍຄວາມຮີບຮ້ອນ ແລະ ອຸທິດຕົນໃຫ້ກັບວຽກງານ.

2. **ທ່ານ ໂພໄຊ ໄຂຄໍາພິທູນ, ຮອງລັດຖະມົນຕີກະຊວງການຕ່າງປະເທດ**

- ທ່ານໄດ້ສະແດງຄວາມຂອບໃຈຜູ້ແທນກອງປະຊຸມທີ່ໄດ້ນໍາສະເໜີບັນຫາຕ່າງໆໃນກອງປະຊຸມ.
- ວຽກງານແກ້ໄຂບັນຫາ ລບຕ ເວລາໃດກໍ່ຖືເປັນວຽກງານສໍາຄັນຂອງລັດຖະບານ. ສະນັ້ນ, ຂໍຢໍ້າຄືນວ່າການປັບປຸງ ຄຊກລ ແມ່ນເປັນການຮັດແໜ້ນສະບົບປະສານງານ, ຄຸ້ມຄອງ ແລະ ດໍາເນີນວຽກງານໃຫ້ກະທັດຫັດ, ມີປະສິດທິພາບ, ປະສິດທິຜົນ ແລະ ສາມາດວັດແທກໄດ້.
- ສໍາລັບລະບຽບການປະຕິບັດວຽກງານແກ້ໄຂບັນຫາ ລບຕ ແມ່ນຈະສືບຕໍ່ປະຕິບັດຕາມດໍາລັດວ່າດ້ວຍການແກ້ໄຂບັນຫາ ລບຕ ສະບັບເລກທີ 210/ລບ, ລົງວັນທີ 29 ກໍລະກົດ 2022, ແຕ່ຈະມີພຽງການດັບປັບພາກທີ 10 ກໍຄືໂຄງປະກອບຂອງ ຄຊກລ. ສໍາລັບວຽກງານວິຊາການ ແມ່ນສືບຕໍ່ປະຕິບັດຕາມນິຕິກໍາດັ່ງກ່າວ ແລະ ການປະສານງານແມ່ນປະສານຜ່ານ ຫ້ອງການ ຄຊກລ ເພື່ອລາຍງານຕໍ່ກະຊວງການຕ່າງປະເທດ.
- ສໍາລັບດ້ານມະຫາພາກ, ຫຼັງຈາກສໍາເລັດການປັບປຸງດໍາລັດໃນພາກທີ 10 ແລ້ວ, ຈະມີການຈັດກອງປະຊຸມ ຄຊກລ ຄົບຄະນະຂຶ້ນ ໂດຍການເປັນປະທານຂອງ ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ເພື່ອຮັບຮອງວິໄສທັດ, ແຜນວຽກ ຂອງ ຄຊກລ ແລະ ເອກະສານປິ່ນອ້ອມເຊັ່ນ: ການອອກຄໍາແນະນໍາ ຫຼື ຄູ່ມືການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ລວມທັງລາຍລະອຽດວິທີການປະສານງານ ແລະ ດໍາເນີນເອກະສານ ເພື່ອໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໄດ້ນໍາໄປຈັດຕັ້ງປະຕິບັດໄດ້ສະດວກຍິ່ງຂຶ້ນ ແລະ ເປັນເອກະພາບກັນ.
- ການມອບ-ໂອນວຽກ ຄຊກລ ມາຂຶ້ນກັບກະຊວງການຕ່າງປະເທດ ໄດ້ຮຽກຮ້ອງໃຫ້ພວກເຮົາຕ້ອງປັບປຸງກົນໄກກອງປະຊຸມຂະແໜງງານແກ້ໄຂບັນຫາ ລບຕ ທີ່ເປັນໜຶ່ງໃນຂະບວນການໂຕະມົນ, ຊຶ່ງກະຊວງການຕ່າງປະເທດຈະນໍາເອົາຄໍາຄິດເຫັນທີ່ໄດ້ຈາກກອງປະຊຸມ ໄປປັບປຸງ ແລະ ສົ່ງໃຫ້ກະຊວງແຜນການ ແລະການລົງທຶນ ດັບປັບເຂົ້າໃນຂະບວນການໃຫ້ສອດຄ່ອງ.
- ຕໍ່ກັບໜ້າວຽກທີ່ໄດ້ຈະສືບຕໍ່ປຶກສາຫາລືໃນກອງປະຊຸມວິຊາການກ່ຽວກັບການປິ່ນອ້ອມຕ່າງໆ, ຫຼັງຈາກຈົບກອງປະຊຸມ, ຫ້ອງການ ຄຊກລ ຈະໄດ້ສົ່ງຜົນກອງປະຊຸມ ພ້ອມວຽກງານທີ່ຈະໄດ້ສືບຕໍ່ປຶກສາຫາລືກັນໃນກອງປະຊຸມຂັ້ນວິຊາການ ໃຫ້ພາກສ່ວນກ່ຽວຂ້ອງ ເພື່ອກະກຽມເຂົ້າຮ່ວມປຶກສາຫາລືໃນຂອບ

ກອງປະຊຸມປຶກສາຫາລືລະດັບວິຊາການ (Technical Working Group) ແລ້ວລາຍງານຜົນໃຫ້ກອງປະຊຸມຂະແໜງການເພື່ອພິຈາລະນາຂັ້ນຕໍ່ໄປ.

ທ່ານ ໂພໄຊ ໄຂຄໍາພິທູນ, ຮອງລັດຖະມົນຕີກະຊວງການຕ່າງປະເທດ.

ລາຍເຊັນ______________________ວັນທີ______________

ທ່ານ ນາງ **Martine Thérer**, ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາປະຈໍາ ສປປ ລາວ.

ລາຍເຊັນ______________________ວັນທີ 19/1/2024

ທ່ານ Michelle Y. Outlaw, ອຸປະທູດສະຫະລັດອາເມລິກາ ປະຈໍາ ສປປ ລາວ

ລາຍເຊັນ______________________ວັນທີ Jan. 31, 2024